**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ພະແນກສຶກສາທິການ ແລະ ກິລາ

ເລກທີ 0960/ສກນວ

ນະຄອນຫຼວງວຽງຈັນ, ວັນທີ 10 ເມສາ 2026

# ຫນັງສືແຈ້ງເຊີນປະມູນ

1. ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເຫມາະສົມ ເຂົ້າຍື່ນຊອງປະມູນ ສໍາລັບໂຄງການ: ກໍ່ສ້າງໂຮງຮຽນ ແລະ ສະຫນອງເຟີນີເຈີ້ ໃຫ້ໂຮງຮຽນປະຖົມສົມບູນ ໂພນປ່າເປົ້າ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ ໃຫ້ສໍາເລັດ 24 ເດືອນ;
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເຫມາະສົມ;
4. ບໍລິສັດທີ່ມີຄຸນນະວຸດທິເຫມາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ຂະແໜງບໍລິຫານ ແລະ ການເງິນ ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ, ໂທລະສັບ 020 5555 1549 (ໃນໂມງລັດຖະການ), ຫາ 28 ພຶດສະພາ 2026;
5. ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈໂດຍການຍື່ນຫນັງສືສະເຫນີຫາ (ທີ່ຢູ່ຂ້າງລຸ່ມນີ້, ເລີ່ມແຕ່ວັນທີ 22 ເມສາ 2026 ເປັນຕົ້ນໄປ, ໃນລາຄາ 1,000,000 ກີບ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງທີ່ຢູ່ລຸ່ມນີ້, ໃນເວລາ ຫລື ກ່ອນເວລາ 14:00 ໂມງ ຂອງວັນທີ 28 ພຶດສະພາ 2026 ທີ່ຫ້ອງປະຊຸມ ຊັ້ນ 04 ຕຶກ ຫ້ອງການຊົ່ວຄາວພະແນກສຶກສາທິການ ແລະ ກິລາ ທີ່ຕັ້ງຢູ່ບ້ານ ຈອມມະນີ ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ (ຢູ່ໃກ້ກັບໂຮງແຮມແສງແກ້ວ ແລະ ໂຮງແຮມລາດສະວົງ ຫຼັກ6 ), ຖ້າຫາກບໍລິສັດໃດບໍ່ມາ ຫຼື ມາຊ້າເກີນ 10 ນາທີຖືວ່າສະລະສິດ. ຊອງປະມູນທີ່ສົ່ງມາທາງເອເລັກໂຕນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ;
   ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 14:00 ໂມງ, ວັນທີ 28 ພຶດສະພາ 2026 ທີ່ຫ້ອງປະຊຸມ ຊັ້ນ 04 ຕຶກ ຫ້ອງການຊົ່ວຄາວພະແນກສຶກສາທິການ ແລະ ກິລາ ທີ່ຕັ້ງຢູ່ບ້ານ ຈອມມະນີ ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ (ຢູ່ໃກ້ກັບໂຮງແຮມແສງແກ້ວ ແລະ ໂຮງແຮມລາດສະວົງ ຫຼັກ6 ), ໂດຍຊ້ອງຫນ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ;
7. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກາງດ ຫລື ຫນັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ມາພ້ອມ.

**ຫົວໜ້າພະແນກ**

ພະແນກ ສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ

ນ. ລີປ່າເອ້ຍ ລີບົວປາວ

ສະແກນດ້ວຍ CamScanner